ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ)
**ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)**

ເລກທີ 0009/ທລຍ
ວັນທີ 10 JAN 2017

**ບົດສະຫຼຸບ**

**ປະຈຳເດືອນ ທັນວາ 2016 ແລະ ແຜນວຽກເດືອນ ມັງກອນ 2017**

1. ວຽກງານທີ່ພົ້ນເດັ່ນໃນເດືອນ ທັນວາ 2016:

ເດືອນທັນວາ 2016 ແມ່ນເດືອນສຸດທ້າຍຂອງການຈັດຕັ້ງປະຕິບັດວຽກງານ ທລຍ 2, ແລະ ເປັນໄລຍະເຊື່ອມຕໍ່ກັບ ທລຍ 3, ສະນັ້ນ ມີຫລາຍໜ້າວຽກທີ່ພະນັກງານ ທລຍ ທຸກຄົນຕ້ອງສຸມທຸກສະຕິປັນຍາໃສ່ ເປັນຕົ້ນແມ່ນການສະຫລຸບຕີລາຄາຜົນໄດ້ຮັບລວມຂອງໂຄງການ ທັງທາງດ້ານປະລິມານ ແລະ ຄຸນນະພາບ. ໃນນັ້ນມີທັງໝົດ 1931 ໂຄງການຍ່ອຍທີ່ໄດ້ຜ່ານການຮັບຮອງ ແລະ ຈັດຕັ້ງປະຕິບັດເກືອບສຳເລັດ ລວມທັງການເບີກຈ່າຍງົບປະມານຕ່າງໆ. ສຳລັບໂຄງການຍ່ອຍທີ່ ທລຍ ໄດ້ໃຫ້ການຊ່ວຍເຫລືອແມ່ນກ່ຽວຂອງກັບ ສຶກສາ, ສາທາລະນະສຸກ, ຄົມມະນາຄົມ, ກະສິກຳ, ນ້ຳສະອາດ ແລະ ໄຟຟ້າຂະໜາດນ້ອຍ. ເປັນໂຄງການຂະໜາດນ້ອຍມູນຄ່າບໍ່ເກີນ 50,000 ໂດລາສະຫະລັດ ທັງນີ້ກໍ່ເພື່ອໃຫ້ຊາວບ້ານສາມາດຄຸ້ມຄອງບໍລິຫານດ້ວຍຕົວຂອງເຂົາເຈົ້າເອງ.

ໂດຍລວມວຽກງານ ທລຍ ບໍ່ພຽງແຕ່ການສະໜອງພື້ນຖານໂຄງລ່າງ ໃຫ້ແກ່ປະຊາຊົນຜູ້ທຸກຍາກເທົ່ານັ້ນ ແຕ່ ທລຍ ແມ່ນໄດ້ ແນໃສ່ການຍົກສູງຂີດຄວາມຮູ້ຄວາມສາມາດຂອງພໍ່ແມ່ປະຊາຊົນ ແລະ ອຳນາດການປົກຄອງທ້ອງຖິ່ນຜ່ານຂະບວນການມີສ່ວນຮ່ວມ ເຮັດວຽກກັບທີມງານ ທລຍ ໃນແຕ່ລະພື້ນທີເປົ້າໝາຍຕັ້ງແຕ່ການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງນຳໃຊ້ໂຄງການຍ່ອຍ. ສິ່ງດັ່ງກ່າວແມ່ນການຜັນປ່ຽນພຶດຕິກຳຂອງປະຊາຊົນ ຈາກຄວາມຄິດແບບຄອງຄອຍພຽງຢ່າງດຽວມາເປັນການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ.

ຕະຫລອດໄລຍະເວລານຶ່ງເດືອນຜ່ານມາ ທລຍ ໄດ້ສຸມໃສ່ບັນດາໜ້າວຽກສຳຄັນ ທີ່ເປັນບຸລິມະສິດກ່ອນປິດບັນຊີໂຄງການ ທລຍ 2 ແລະ ເລີ່ມຈັດຕັ້ງປະຕິບັດ ທລຍ 3 ຢ່າງເປັນທາງການ ນັບແຕ່ ເດືອນມັງກອນ 2017 ເປັນຕົ້ນໄປ.ລວມທັງການຂຶ້ນງົບປະມານກິດຈະກຳຂອງປີ 2017 ເຊິ່ງແມ່ນປີທຳອິດຂອງ ທລຍ 3.

ວຽກງານທີ່ພົ້ນເດັ່ນອີກປະການນຶ່ງແມ່ນການກະກຽມກອງປະຊຸມ ສະພາບໍລິຫານ ທລຍ ຄັ້ງທີ 22 ທີ່ຈະຈັດຂຶ້ນໃນເດືອນ ມັງກອນ 2017. ທາງດ້ານເນື້ອໃນແມ່ນເນັ້ນໃສ່ການສະຫລຸບຕີລາຄາຜົນໄດ້ຮັບຂອງ ທລຍ ຈາກການປະເມີນຂອງ

ຜູ້ໃຫ້ທຶນ ກໍ່ຄືການຕີລາຄາພາຍໃນ. ພ້ອມນັ້ນກໍສະເໜີກ່ຽວກັບແຜນວຽກ ແລະ ງົບປະມານຂອງ ທລຍ 3 ພ້ອມກັບການສະເໜີເພື່ອຮັບຮອງເອົາສະມາຊິກສະພາ ທລຍ ຊຸດໃໝ່ຢ່າງເປັນທາງການ.

## 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

### 2.1. ຮອບວຽນ 13 (ສົກປີ 2015-2016)

ການຈັດຕັ້ງປະຕິບັດ ຮອບວຽນ 13 ເຊິ່ງເປັນຮອບວຽນສຸດທ້າຍຂອງໂຄງການ ທລຍ ໄລຍະທີ 2 ທັງເປັນໄລຍະເຊື່ອມຕໍ່ລະຫວ່າງ ທລຍ ໄລຍະທີ 2 ແລະ ໄລຍະທີ 3 ແມ່ນມີຈຳນວນໂຄງການຍ່ອຍທັງໝົດ 505 ໂຄງການ ທີ່ໄດ້ຮັບການຈັດຕັ້ງປະຕິບັດ, ມີຈຳນວນຫຼາຍກວ່າເຄິ່ງໜຶ່ງ ແມ່ນໂຄງການກ່ຽວຂ້ອງກັບຂະແໜງການສຶກສາ ແລະ ຖືວ່າເປັນບູລິມະສິດຫຼັກໃນ ຮອບວຽນ 13 ເພາະວຽກງານສຶກສາແມ່ນມີບົດບາດສຳຄັນໃນການລຶບລ້າງຄວາມທຸກຍາກ. ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບຈຳນວນ ໂຄງການຕາມແຕ່ລະຂະແໜງການແມ່ນມີດັ່ງລຸ່ມນີ້:

ຕາຕະລາງ 1. ຈຳນວນໂຄງການທັງໝົດ ຕາມຂະແໜງການ ໃນ ຮອບວຽນ 13 (ສົກປີ 2015 - 2016)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ຂະແໜງ ກະສິກຳ ແລະ ປ່າໄມ້ | 21 | 20 | 0 | 1 | 0 |
| ຂະແໜງ ຄົມມະນາຄົມ | 72 | 68 | 0 | 4 | 0 |
| ຂະແໜງ ສາທາລະນະສຸກ | 34 | 30 | 1 | 2 | 1 |
| ຂະແໜງ ສຶກສາ | 264 | 222 | 11 | 26 | 5 |
| ຂະແໜງ ນ້ຳສະອາດແລະສຸຂະອະນາໄມ | 113 | 106 | 5 | 2 | 0 |
| ຂະແໜງ ພະລັງງານ ແລະ ບໍ່ແຮ່ | 1 | 1 | 0 | 0 | 0 |
| **ລວມ** | **505** | **447** | **17** | **35** | **6** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ - ປະເມີນຜົນ, ທລຍ, 30 ທັນວາ 2016*

*ໝາຍເຫດ: ສຳລັບ 6 ໂຄງການຂອງທຶນລັດຖະບານທີ່ຢູ່ໃນງວດ ທີ 2 ແມ່ນກຳລັງຈັດຕັ້ງປະຕິບັດ.*

### 2.2. ຮອບວຽນ 13 ( ສົກປີ 2015 – 2016 )

ສຳລັບຮອບວຽນ 13 (ສົກປີ 2015 - 2016) ມີຈຳນວນທັງໝົດ 505 ໂຄງການຍ່ອຍ ໃນນັ້ນຈັດຕັ້ງປະຕິບັດສຳເລັດແລ້ວ 100% ມີ 447 ໂຄງການເທົ່າກັບ 89% ໂຄງການທີ່ສຳເລັດກ່ວາ 50% ມີ 17 ໂຄງການເທົ່າກັບ 4% ແມ່ນກຳລັງຈະສຳເລັດ, ໂຄງການທີ່ສຳເລັດບໍ່ຮອດ 50% ມີ 36 ໂຄງການເທົ່າກັບ 7%, ແລະ ມີ 6 ໂຄງການແມ່ນກຳລັງດຳເນີນການຈັດຕັ້ງປະຕິບັດ ເປັນຕົ້ນແມ່ນໂຄງການພາຍໃຕ້ທຶນສົມທົບຂອງລັດຖະບານ ງວດ 2 ຈຳນວນ 11 ຕື້ກີບ. ເຊິ່ງຈະເລີ່ມມີການເບີກຈ່າຍແຕ່ເດືອນ ມັງກອນ 2017 ເປັນຕົ້ນໄປ.

ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 13

| ແຂວງ | ຈຳນວນ | ສຳເລັດ | ສຳເລັດກວ່າ | ສຳເລັດບໍ່ຮອດ | ສຳເລັດ 0% |
|---|---|---|---|---|---|

| | ໂຄງການ | 100% | 50% | 50% | |
|---|---|---|---|---|---|
| ແຂວງ ອັດຕະປື | 43 | 34 | 0 | 1 | 2 |
| ແຂວງ ຫົວພັນ | 28 | 60 | 4 | 10 | 0 |
| ແຂວງ ຫລວງນໍ້າທາ | 27 | 16 | 0 | 3 | 1 |
| ແຂວງ ຫຼວງພະບາງ | 41 | 71 | 3 | 1 | 0 |
| ແຂວງ ອຸດົມໄຊ | 20 | 107 | 2 | 0 | 0 |
| ແຂວງ ຜົ້ງສາລີ | 74 | 36 | 0 | 5 | 0 |
| ແຂວງ ສາລະວັນ | 75 | 25 | 0 | 0 | 3 |
| ແຂວງສະຫວັນນະເຂດ | 109 | 28 | 7 | 8 | 0 |
| ແຂວງ ເຊກອງ | 37 | 50 | 0 | 1 | 0 |
| ແຂວງ ຊຽງຂວາງ | 51 | 20 | 1 | 6 | 0 |
| **ລວມ** | **505** | **447** | **17** | **36** | **6** |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 30 ທັນວາ 2016.*

ຕາຕະລາງ 4. ທຶນສົມທົບລັດຖະບານຮອບວຽນ 13

| ແຂວງ | ຈຳນວນ ໂຄງການ | ສຳເລັດ 100% | ສຳເລັດບໍ່ຮອດ 50% | ສຳເລັດກວ່າ 50% | ສຳເລັດ 0% |
|---|---|---|---|---|---|
| ແຂວງ ສະຫວັນນະເຂດ | 23 | 11 | 4 | 8 | 0 |
| ແຂວງ ສາລະວັນ | 7 | 4 | 0 | 0 | 3 |
| ແຂວງ ຊຽງຂວາງ | 14 | 7 | 1 | 6 | 0 |
| ແຂວງ ຜົ້ງສາລີ | 7 | 3 | 0 | 4 | 0 |
| ແຂວງ ຫລວງນໍ້າທາ | 8 | 4 | 0 | 3 | 1 |
| ແຂວງ ຫົວພັນ | 25 | 11 | 4 | 10 | 0 |
| ແຂວງ ຫຼວງພະບາງ | 11 | 7 | 3 | 1 | 0 |
| ແຂວງ ອຸດົມໄຊ | 6 | 4 | 2 | 0 | 0 |
| ແຂວງ ອັດຕະປື | 6 | 3 | 0 | 1 | 2 |
| ແຂວງ ເຊກອງ | 3 | 2 | 0 | 1 | 0 |
| **ລວມ** | **110** | **56** | **14** | **34** | **6** |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 30 ທັນວາ 2016.*

ຕາຕະລາງ 5. ທຶນສົມທົບລັດຖະບານຮອບວຽນ 13 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດບໍ່ຮອດ 50% | ສຳເລັດກວ່າ 50% | ສຳເລັດ 0% |
|---|---|---|---|---|---|
| ຂະແໜງ ກະສິກຳ ແລະ ປ່າໄມ້ | 2 | 1 | 0 | 1 | 0 |
| ຂະແໜງ ຄົມມະນາຄົມ | 7 | 4 | 0 | 3 | 0 |
| ຂະແໜງ ສາທາລະນະສຸກ | 5 | 2 | 0 | 2 | 1 |
| ຂະແໜງ ສຶກສາ | 79 | 38 | 10 | 26 | 5 |
| ຂະແໜງ ນ້ຳສະອາດ ແລະ ສຸຂະອະນາໄມ | 17 | 11 | 4 | 2 | 0 |
| ລວມ | **110** | **56** | **14** | **34** | **6** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 30 ທັນວາ 2016.*

**ໝາຍເຫດ**: ໂຄງການພາຍໃຕ້ທຶນຂອງລັດຖະບານງວດ 2 ໃນບ້ວງ 5 ຕື້ກີບ (ປີ 2016) ມີຈຳນວນ 16 ໂຄງການ ແມ່ນຢູ່ໃນໄລຍະຈັດຕັ້ງປະຕິບັດໃກ້ຈະສຳເລັດ ແລະ ກຳລັງກະກຽມເອກະສານ ເພື່ອຂໍເບີກຈ່າຍງົບປະມານ, ສ່ວນບ້ວງ 11 ຕື້ມີ 42 ໂຄງການແມ່ນສາມາດເບີກຈ່າຍແຕ່ ປີ 2017 ເປັນຕົ້ນໄປ.

## 3. ງົບປະມານ ແລະ ການເບີກຈ່າຍສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ 2

ສຳລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ຕຸລາ 2016 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 100% ເທົ່າກັບ 61,114,300,917 ກີບ, ຮອບວຽນ 10 ເບີກຈ່າຍໄປແລ້ວ 79,464,302,522 ກີບ ເທົ່າກັບ 100% ຂອງງົບປະມານທັງໝົດ ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈຳນວນ 78,965,855,350 ກີບ ຫລື ເທົ່າກັບ 100% ຂອງງົບປະມານທັງໝົດ ແລະ ສຳລັບຮອບວຽນ 12 ແມ່ນໄດ້ເບີກຈ່າຍໄປແລ້ວ 82,828,273,064 ກີບ ຫລື ເທົ່າກັບ 100%, ສຳລັບຮອບວຽນ 13 ໄດ້ເບີກຈ່າຍ ໄປແລ້ວ 97 % ຂອງງົບປະມານ ທັງໝົດ, ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 7. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2016)

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສຳເລັດ 100% | ການເບີກຈ່າຍ ງົບປະມານ | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 261 | 61,114,300,917 | 0 |
| ຮອບວຽນ 10 (2012-2013) | 393 | 79,464,302,522 | 392 | 79,464,302,522 | 0 |
| ຮອບວຽນ 11 (2013-2014) | 333 | 78,965,855,350 | 332 | 78,965,855,350 | 0 |

| | | | | | |
|---|---|---|---|---|---|
| ຮອບວຽນ 12 (2014-2015) | 438 | 82,826,807,425 | 438 | 82,826,807,425 | 0 |
| ຮອບວຽນ 13 ( 2015-2016) | 505 | 103,023,450,603[1] | 447 | 89,784,033,441 | 13,239,417,192 |
| ລວມ | **1,931** | **405,394,716,817** | **1,873** | **392,155,299,655** | **13,239,417,192** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ແລະ ພະແນກບໍລິຫານ-ການເງິນ, ທລຍ, 30 ທັນວາ 2016.*

4. ວຽກປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ (LN)

4.1. ກິດຈະກຳປັບປຸງຊີວິດການເປັນຢູ່

4.1.1. ການທ້ອນເງິນ

ຢູ່ໃນ 165 ບ້ານລວມທັງ 7 ເມືອງ ຂອງ 2 ແຂວງຄື ແຂວງ ສະຫວັນ ແລະ ແຂວງ ຫົວພັນ. ການທ້ອນເງິນຂອງກຸ່ມຊ່ວຍເຫລືອເຊິ່ງກັນ ແລະ ກັນທັງຫມົດ 915 ກຸ່ມ ເປັນກຸ່ມເກົ່າ 696 ແລະ ໄດ້ຂະຫຍາຍເພີ່ມ 219 ກຸ່ມ ແລະ ລວມມີສະມາຊິກທັງຫົມດ 10,233 ຄົນ ເປັນຍິງ 8,704 ຄົນ ອີງຕາມການເຄື່ອນໄຫວລົງຕິດຕາມການທ້ອນເງິນ ປະຈຳເດືອນ 12 ປີ 2016 ເງິນຝາກທັງໝົດໃນປະຈຸບັນມີ: 934,346,000 ກີບ.

4.1.2. ການປ່ອຍເງິນໃຫ້ສະມາຊິກກູ້ຢືມ ເດືອນ 12/2016

ການປ່ອຍເງິນໃຫ້ສະມາຊິກເພື່ອດຳເນີນກິດຈະກຳປັບປຸງຊີວິດການເປັນຢູ່ເຊັ່ນ: ການລ້ຽງສັດ, ການປູກຝັງ ແລະ ຫັດຖະກຳຕໍ່າຫູກ ທີ່ເປັນການສ້າງລາຍຮັບໃຫ້ແກ່ສະມາຊິກ. ໃນເດືອນ 12 ປີ 2016 ໄດ້ປ່ອຍໃຫ້ 165 ບ້ານ, 915 ກຸ່ມ ຈາກ 696 ໄດ້ມີການຂະຫຍາຍເພີ່ມ 219 ກຸ່ມ ລວມເປັນເງິນ 2,753,281,444 ກີບ.

4.1.3. ການສ້າງລາຍຮັບຂອງກຸ່ມ ກຊກ ໃນ 4 ເມືອງ

ການສ້າງລາຍຮັບໃນປະຈຸບັນມີ 4 ເມືອງເກົ່າທີ່ໄດ້ດຳເນີນກິດຈະກຳຂອງໂຄງການເຊັ່ນ ການລ້ຽງໄກ່, ການລ້ຽງປາ, ການຕໍ່າຫູກ, ການລ້ຽງໝູ, ລ້ຽງແບ້ ແລະ ອື່ນໆ ທີ່ນອນໃນ 2 ແຂວງຄື ແຂວງ ສະຫວັນ ແລະ ແຂວງຫົວພັນລວມມີ 89 ບ້ານ, 323 ກຸ່ມ ມີສະມາຊິກ 4,720 ຄົນ ເປັນຍິງ 3,493 ຄົນ. ປະຈຸບັນມີລາຍຮັບຢູ່ທີ່ 4,389,755,000 ກີບ.

4.2. ວຽກງານດ້ານໂພຊະນາການ

ສະໂມສອນໂພຊະນາການແມ່ນກິດຈະກິດຈະກຳປຸງແຕ່ງອາຫານກາງວັນໃຫ້ແກ່ແມ່ຍິງທີ່ກຳລັງຖືພາ, ໃຫ້ນົມລູກ ແລະ ເດັກນ້ອຍໃນລະຫວ່າງເກີດໃຫມ່ ຫາ 2 ປີ, ກິດຈະກຳດັ່ງກ່າວໄດ້ນຳໃຊ້ ງົບປະມານ ເພື່ອປຸງແຕ່ງອາຫານ ພາຍໃນ 7 ເມືອງ ລວມມີທັງຫມົດ 23 ສູນ ງົບປະມານທັງຫມົດ 1,759,741,000 ກີບ, ເງິນໃນບັນຊີ 248,498,789 ກີບ, ເງິນສົດ 77,664,500 ກີບ, ຈຳນວນເງິນທີ່ໄດ້ຈ່າຍ 1,511,242,211 ກີບ ແລະ ຈຳນວນເງິນທີ່ຫຍັງເຫລືອ 203,234,000 ກີບ.

4.2.1. ວຽກງານດ້ານໂພຊະນາສຶກສາ

ວຽກງານດ້ານໂພຊະນາສຶກສາໄດ້ຈັດຕັ້ງປະຕິບັດພາຍໃນເດືອນ ມີຫົວຂໍ້ດັ່ງນີ້:

- ໃຫ້ຄວາມຮູ້ກ່ຽວກັບໝວດອາຫານ

[1] ຕົວເລກດັ່ງກ່າວແມ່ນລວມທັງ ທຶນສົບທົບ ລັດຖະບານ 1 ແລະ 2

- ອາຫານປະເພດເມັດທີ່ໃຫ້ຄຸນປະໂຫຍດ(ແກ່ນພືດ)
- ອາຫານທີ່ມີໂປຼຕີນແລະວິທີປຸງແຕ່ງ
- ອາຫານຫຼັກທີ່ໃຫ້ພະລັງງານປະເພດທາດແປ້ງ
- ສຸຂະອານາໄມ 3 ສະອາດ
- ໃຫ້ຄວາມໃນການດູແລເດັກເກີດໃໝ່ແລະດູແລໂຕໃນໄລຍະແມ່ຫຼັງເກີດ
- ການລ້ຽງລູກດ້ວຍນົມແມ່ ນັບແຕ່ແລກເກີດຈົນຮອດ 6 ເດືອນ
- ການວາງແຜນລູກຫ່າງ, ວິທີເອົາໃຈໃສ່ໃນການສັກຢາປ້ອງກັນພະຍາດ

4.2.2. ວຽກງານໂພຊະນາການ ແມ່ ແລະ ເດັກ

1. ລົງເຄື່ອນໄຫວໂຄສະນາສຸຂະສຶກສາ ແລະ ໂພຊະນາສຶກສາທີເຊື່ອມໂຍງກັບວຽກງານຊີວິດການເປັນຢູ່
2. ບໍລິການກວດທ້ອງແມ່ມານ (ໃຫ້ຢາທາດເຫຼັກ ອາຊິດຟູລິກ)
3. ກວດແມ່ຫຼັງເກີດ
4. ສັກຢາວັກຊີນໃຫ້ເດັກກຸ່ມເປົ້າໝາຍ
5. ໃຫ້ຢາຂ້າແມ່ທ້ອງສໍາລັບເດັກກຸ່ມເປົ້າໝາຍ
6. ໃຫ້ຢາທາດ (ເຫຼັກອາຊິດຟູລິກ) ແກ່ແມ່ຍິງໄວຈະເລີນພັນ ອາຍຸ 12 - 45 ປີ

**4.3.3. ວຽກງານພັດທະນາສວນຄົວ**

1. ນໍາພາສະມາຊິກປູກຜັກໃສ່ສວນຄົວໃຫ້ໄດ້ຫລາຍຊະນິດ
2. ອະນາໄມບົວລະບັດສວນຄົວຢູ່ສະໂມສອນ

5. ແຜນວຽກປະຈໍາເດືອນ ມັງກອນ 2017

- ກະກຽມກອງປະຊຸມສະພາບໍລິຫານ ທລຍ ຄັ້ງທີ 22 ເພື່ອສະເໜີຮັບຮອງເອົາໂຄງຮ່າງການຈັດຕັ້ງຂອງສະມາຊິກສະພາ ທລຍ ຊຸດໃໝ່ຢ່າງເປັນທາງການ.
- ເຮັດບົດສະຫລຸບສັງລວມ 3 ເດືອນ ທ້າຍປີ 2016 ເຊິ່ງແມ່ນໄລຍະປິດບັນຊີ ຂອງ ທລຍ 2 ແລະ ເລີ່ມຈັດຕັ້ງປະຕິບັດວຽກງານ ທລຍ 3.
- ຕ້ອນຮັບການມາຢ້ຽມຢາມຂອງຕາງໜ້າຜູ້ໃຫ້ທຶນ ຈາກອົງການຮ່ວມມືເພື່ອພັດທະນາຂອງປະເທດສະວິດສະແລນ ເພື່ອຕິດຕາມຄວາມຄືບໜ້າຂອງວຽກງານ ທລຍ ແລະ ກຽມແຜນໃນໄລຍະຕໍ່ໄປ.
- ສືບຕໍ່ສະຫລຸບສັງລວມ ແລະ ບັນລຸພະນັກງານໃນແຕ່ລະຕໍາແໜ່ງງານໃນ ທລຍ 3 ເພື່ອຮັບປະກັນຄວາມຕໍ່ເນື່ອງໃນການເຮັດວຽກ.

ຜູ້ອໍານວຍການບໍລິຫານ ທລຍ

ບົວລີ ໄຊຍະວົງ